# ໂຄງການສຶກສາການຄວບຄຸມພະຍາດຊຳເຮື້ອໂດຍຕົນເອງ
# ບົດຄຳເວົ້າຂອງຜູ້ນຳພາກຸ່ມ

## ສຳລັບສະຖານທີ່ບໍ່ໄດ້ຮັບເງິນທຶນເທົ່ານັ້ນ

**ຈົ່ງອ່ານຄຳແຈ້ງການຕໍ່ລົງໄປນີ້ໃຫ້ຜູ້ເຂົ້າຮ່ວມຟັງກ່ອນການຂຽນປະກອບໃບສຳຣວດລາຍລະອຽດກ່ຽວກັບຜູ້ເຂົ້າຮ່ວມ**

- ທ່ານກຳລັງໄດ້ຮັບໃບສຳຣວດສອງໜ້າ, ຊຶ່ງແມ່ນຕາມໃຈສຳລັບທ່ານ ແລະ ທ່ານບໍ່ຕ້ອງໄດ້ຂຽນປະກອບໃບສຳຣວດເພື່ອຈະເຂົ້າຫ້ອງຮຽນອັນນີ້.
- ກ່ອນທີ່ພວກເຮົາຈະສາມາດແລກປ່ຽນລາຍລະອຽດກ່ຽວກັບທ່ານ, ພວກເຮົາຕ້ອງການທີ່ຈະອະທິບາຍວ່າລາຍລະອຽດຂອງທ່ານຈະຖືກໃຊ້ ແລະ ປ້ອງກັນໄວ້ແນວໃດ.
- ລາຍລະອຽດຂອງທ່ານແມ່ນມີຄຸນຄ່າຫລາຍຕໍ່ພວກເຮົາ. ພວກເຮົາໃຊ້ມັນເພື່ອຈະຮຽນຮູ້ວ່າແມ່ນໃຜແດ່ຖືກຕິດຕໍ່ຫາໂດຍໂຄງການອັນນີ້ ແລະ ເພື່ອຈະສົ່ງເສີມການບໍຣິການຂອງພວກເຮົາ. ມັນຍັງຈະຊ່ວຍຫ້ອງການທີ່ອອກເງິນທຶນຂອງພວກເຮົາທີ່ຈະສະແດງໃຫ້ເຫັນວ່າເຂົາເຈົ້າໃຊ້ຈ່າຍເງິນຂອງເຂົາເຈົ້າຢ່າງສະຫລາດຫລັກແຫລມ.
- ໃນຕອນຕົ້ນຂອງໜ້າສຳຣວດ, ພວກເຮົາຂໍເອົາຊື່ຂອງທ່ານ ຫລື ທາງອື່ນທາງໃດທາງນຶ່ງເພື່ອຈະຊີ້ບອກເອກກະລັກຂອງທ່ານເຊັ່ນວ່າ ເລກ ຫລື ຊື່ນ້ອຍ. ພວກເຮົາຈະໃຊ້ອັນນີ້ເພື່ອຈະສົມທຽບໃສ່ລາຍລະອຽດຂອງທ່ານໃສ່ນຳບັນທຶກການມາເພື່ອຈະຕິດຕາມນຳວ່າທ່ານມາເຂົ້າຫ້ອງຮຽນຈັກເທື່ອ. ພວກເຮົາບໍ່ແລກປ່ຽນຊື່ຂອງທ່ານນຳຄົນອື່ນຄົນໃດຄົນນຶ່ງອີກ.
- ໃບສຳຣວດຍັງຈະຂໍໃຫ້ທ່ານເອົາໃຫ້ອີກວັນເກີດຂອງທ່ານ, ຊິບໂຄດ, ແລະ ເພດຂອງທ່ານ. ຊື່ ຫລື ຊື່ນ້ອຍຈະຖືກເອົາອອກ ແລະ ລາຍລະອຽດຕ່າງໆທີ່ທ່ານໄດ້ເລືອກເອົາທີ່ຈະແລກປ່ຽນກັນຈະຖືກຕີເຂົ້າໃນບ່ອນເກັບຂໍ້ມູນ CDSME ແຫ່ງຊາດທີ່ປອດພັຍ. ມີແຕ່ລາຍລະອຽດທີ່ເກັບກຳເອົາມາເທົ່ານັ້ນ, ບໍ່ແມ່ນລາຍລະອຽດສ່ວນບຸກຄົນຈະຖືກໃຊ້.
- ພວກເຮົາຈະປະຕິບັດຕາມກົດລະບຽບອັນເຂັ້ງຄັດທີ່ສຸດເພື່ອຈະປ້ອງກັນລາຍລະອຽດຂອງທ່ານທຸກໆຢ່າງ ແລະ ເພື່ອຈະເກັບຮັກສາໄວ້ໃຫ້ເປັນຄວາມລັບສ່ວນຕົວ. ພວກເຮົາຈະຮັກສາເຈັ້ຽໃບຟອມເຫລົ່ານີ້ໄວ້ໃຫ້ປອດພັຍໂດຍການປະຕິບັດຕາມພາກປະຕິບັດຕາມມາດຕະຖານສຳລັບການປ້ອງກັນຂໍ້ມູນໄວ້ເປັນສ່ວນຕົວ. ຫລັງຈາກທີ່ບຸກຄົນຜູ້ທີ່ຖືກຝຶກຝົນມາໄດ້ຕີລາຍລະອຽດຂອງທ່ານເຂົ້າໃນຄອມພິວເຕີທີ່ປອດພັຍ, ພວກເຮົາຈະທຳລາຍໃບຟອມເຫລົ່ານີ້.
- ການຂຽນປະກອບໃບສຳຣວດແມ່ນຕາມສະມັກໃຈທັງໝົດ ແລະ ທ່ານຈະຂ້າມຄຳຖາມອັນໃດກໍໄດ້ທີ່ທ່ານບໍ່ຢາກຈະຕອບ. ໃນເວລາເຮັດໃບສຳຣວດ, ທ່ານຈະຂໍໃຫ້ພວກເຮົາໃຫ້ອະທິບາຍຄຳຖາມຕ່າງໆທີ່ທ່ານພົບວ່າຫຍຸ້ງສັບສົນ.
- ຖ້າຫາກວ່າທ່ານຕັດສິນໃຈທີ່ຈະບໍ່ຂຽນປະກອບໃບສຳຣວດ ທ່ານຍັງຈະສາມາດເຂົ້າຮ່ວມໃນໂຄງການອັນນີ້ໄດ້.